ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມເຜີຍແຜ່ວຽກງານຂໍ້ມູນຂ່າວສານສິນເຊື່ອ





ໃນວັນທີ 05 ກັນຍາ 2022 ຜ່ານມານີ້, ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ໄດ້ຈັດກອງປະຊຸມເຜີຍແຜ່ວຽກງານຂໍ້ມູນຂ່າວສານສິນເຊື່ອຂຶ້ນ" ໂດຍການໃຫ້ກຽດເປັນປະທານຮ່ວມຂອງທ່ານ ນ. ວິນຄຳ ລຸນທອນ ຜູ້ອຳນວຍການ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ແລະ ທ່ານ ສົມຈິດ ຄຳມຸງຄຸນ ຮອງຫົວໜ້າຫ້ອງການ ກະຊວງການເງິນ, ຕ່າງໜ້າຄະນະພະແນກ ແລະ ພະນັກງານພາຍໃນກະຊວງການເງິນເຂົ້າຮ່ວມ.





ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ເພື່ອເປັນການເຜີຍແຜ່ດຳລັດ ແລະ ຄວາມສຳຄັນຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ ປະຈຸບັນການນຳໃຊ້ເຕັກນິກທີ່ທັນສະໄໝ ກໍຄືລະບົບຂໍ້ມູນຂ່າວສານສິນເຊື່ອ ທີ່ໄດ້ນຳໃຊ້ເກັບກຳ ແລະ ໃຫ້ບໍລິການຂໍ້ມູນຂ່າວສານສິນເຊື່ອແບບທັນທີ (ອອນລາຍ) ເຊິ່ງຂໍ້ມູນຂ່າວສານສິນເຊື່ອ ຕົ້ນຕໍແມ່ນຮັບໃຊ້ໃຫ້ແກ່ບັນດາສະຖາບັນການເງິນໃນເວລາກ່ອນອະນຸມັດເງິນກູ້ຂອງລູກຄ້າ ຕ້ອງໄດ້ເຂົ້າຄົ້ນຫາຂໍ້ມູນປະຫວັດການເຄື່ອນໄຫວເງິນກູ້ຂອງລູກຄ້າ ເພື່ອເປັນບ່ອນອີງໃນການພິຈາລະນາປ່ອຍເງິນກູ້ຂອງຕົນ ແລະ ກໍຍັງສາມາດນຳໃຊ້ເຂົ້າໃນການທົບທວນ, ປັບໂຄງສ້າງໜີ້, ແຈ້ງເຕືອນເງິນກູ້ທີ່ມີຄວາມສ່ຽງ ແລະ ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອເຂົ້າໃນວຽກງານອື່ນໆ ແມ່ນການສະໜອງຂໍ້ມູນໃຫ້ແກ່ພາກລັດ ແລະ ສົ່ງເສີມໃຫ້ສັງຄົມມີວິໄນທາງດ້ານການເງິນ.

ນອກຈາກວຽກງານຂໍ້ມູນຂ່າວສານສິນເຊື່ອຈະໄດ້ເກັບກຳຂໍ້ມູນກັບບັນດາສະມາຊິກກໍຄືສະຖາບັນການເງິນແລ້ວ ວຽກງານດັ່ງກ່າວກໍຍັງຕິດພັນກັບຫຼາຍພາກສ່ວນທັງພາກລັດ ແລະ ເອກະຊົນ ກໍຄືບັນດາກະຊວງ ແລະ ບໍລິສັດ ສາທາລະນຸປະໂພກ ໃນການເກັບກຳຂໍ້ມູນທີ່ກ່ຽວຂ້ອງ ເພື່ອນຳມາພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ມີຄວາມຄົບຖ້ວນ

ສົມບູນ ແລະ ມີຄຸນະພາບ ໂດຍອີງຕາມ ການປັບປຸງ ກົນໄກການອໍານວຍຄວາມສະດວກ ໃນການດໍາເນີນທຸລະກິດໃນ ສປປ ລາວ ຕາມຄໍາສັ່ງ ເລກທີ 02/ນຍ ແລະ ການປະເມີນຂອງທະນາຄານໂລກ ຊຶ່ງຕິດພັນກັບການເກັບກໍາຂໍ້ມູນ ແລະ ສ້າງ ຜະລິດຕະພັນໃໝ່ໆ ສະນັ້ນ, ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທີ່ຢູ່ພາຍໃຕ້ການຊີ້ນໍາ-ນໍາພາ ຂອງທະນາຄານ ແຫ່ງ ສປປ ລາວ ເຊິ່ງໄດ້ຮັບການສ້າງຕັ້ງບໍລິສັດຂຶ້ນໃນທ້າຍປີ 2019 ກໍໄດ້ເອົາໃຈໃສ່ໃນການປະຕິບັດວຽກງານຂອງຕົນ ດ້ວຍຄວາມຫ້າວຫັນ ໃນການປະສານສົມທົບ ແລະ ເກັບກໍາຂໍ້ມູນຈາກພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຂໍ້ມູນມີຄວາມສົມບູນ ແລະ ຄົບຖ້ວນ.

ກອງປະຊຸມໄດ້ດໍາເນີນໄປເປັນເວລາເຄິ່ງວັນ ແລະ ມີບັນຍາກາດຟົດຟື້ນ ໂດຍມີການແລກປ່ຽນຄໍາຄິດ-ຄໍາເຫັນຈາກ ຜູ້ເຂົ້າຮ່ວມ. ເຮັດໃຫ້ກອງໃນຄັ້ງນີ້, ບັນລຸຕາມຈຸດປະສົງເປົ້າໝາຍທີ່ວາງໄວ້.



ຂ່າວ-ພາບ: ທ ສົມພິດ ທໍາມະວົງ

ຢູ່ເມືອງລາວໃຊ້ເງິນກີບລາວ